ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2157 / ອຄ.ສລທ

ນະຄອນຫຼວງວຽງຈັນ, ວັນທີ 10 ຕຸລາ 2012.

# ແຈ້ງການ

**ເຖິງ:** ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ, ນັກທຸລະກິດ(ພາຍໃນ ແລະ ຕ່າງປະເທດ)

**ເລື່ອງ:** ຄຳແນະນຳເພີ່ມເຕີມຂີດໝາຍໜ້າ 2 ແລະ 3 ຂໍ້ໜຶ່ງ, ແຈ້ງການ (ເລກທີ 0458 /ອຄ.ສລທ)

- ອີງໃສ່ຂີດໝາຍໜ້າ 2 ແລະ 3 ຂໍ້ໜຶ່ງ ຂອງແຈ້ງການ, ເລກທີ 0458 /ອຄ.ສລທ, ລົງວັນທີ 1 ມີນາ 2012, ກ່ຽວກັບຂອບເຂດການຂຶ້ນທະບຽນວິສາຫະກິດ ສຳລັບການລົງທຶນໃນກິດຈະການທົ່ວໄປ ລະຫວ່າງກະຊວງ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;

ເພື່ອຮັບປະກັນ ຄວາມສະດວກສຳລັບນັກລົງທຶນຕ່າງປະເທດ ໃນບາງກໍລະນີທີ່ມີຄວາມຈຳເປັນເລັ່ງດ່ວນ ເນື່ອງຈາກເຫດຜົນຂອງການດຳເນີນທຸລະກິດໃດໜຶ່ງ, ກະຊວງອຸດສາຫະກຳ ແລະການຄ້າ ແຈ້ງມາຍັງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້ :

1. ເພື່ອຮັບປະກັນຜົນກະທົບດ້ານກົດໝາຍ ຈາກການຂຶ້ນທະບຽນວິສາຫະກິດ ໃຫ້ແກ່ວິສາຫະກິດທີ່ມີຜູ້ລົງທຶນຕ່າງປະເທດ ຖືຮຸ້ນແຕ່ 50% ຂຶ້ນໄປ ໂດຍສະເພາະແມ່ນຜົນກະທົບດ້ານກົດໝາຍກ່ຽວກັບບັນຫາສັນຊາດຂອງນິຕິບຸກຄົນ ຊຶ່ງປະເທດເຮົາຍັງບໍ່ທັນມີກົດໝາຍຮອງຮັບໃນເລື່ອງນີ້ເທື່ອນັ້ນ, ຖ້າບໍ່ມີເຫດຈຳເປັນແທ້ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແນະນຳໃຫ້ວິສາຫະກິດທີ່ກ່ຽວຂ້ອງມາຂຶ້ນທະບຽນວິສາຫະກິດຢູ່ກົມສົ່ງເສີມການລົງທຶນທົ່ວໄປ (ຕາມແຈ້ງການ ເລກທີ 0458/ອຄ.ສລທ) ກ່ອນ ຈົນກ່ວາຈະມີລະບຽບການປ່ຽນແປງເປັນຢ່າງອື່ນ;

2. ໃນກໍລະນີ ທີ່ເຫັນວ່າມີຄວາມຈຳເປັນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສາມາດຂຶ້ນທະບຽນວິສາຫະກິດໃຫ້ ແຕ່, ຕ້ອງພິຈາລະນາຢ່າງຖີ່ຖ້ວນ ແລະ ຮອບຄອບ ພາຍໃຕ້ເງື່ອນໄຂ ຄື :

- ສຳລັບປະເພດທຸລະກິດຄວບຄຸມ - ຕອ້ງໄດ້ຮັບຄຳເຫັນດີເປັນເອກະພາບ ຈາກຂະແໜງການທີ່ກ່ຽວຂ້ອງຢ່າງຄົບຖ້ວນ;
- ຕ້ອງບໍ່ແມ່ນທຸລະກິດທີ່ສະຫງວນໄວ້ສຳລັບພົນລະເມືອງລາວ ;

- ຕ້ອງສອດຄ່ອງກັບເງື່ອນໄຂ ຫລື ຂໍ້ຈຳກັດ ສຳລັບຜູ້ລົງທຶນຕ່າງປະເທດ ໃນການດຳເນີນທຸລະກິດນັ້ນໆ ຕາມລະບຽບການຂອງບັນດາຂະແໜງການທີ່ກ່ຽວຂ້ອງ;
- ຕ້ອງບໍ່ແມ່ນການຕັ້ງສາຂາວິສາຫະກິດ (ນິຕິບຸກຄົນຕ່າງປະເທດ), ບໍ່ແມ່ນການສ້າງຕັ້ງບໍລິສັດມະຫາຊົນ ແລະ ບໍ່ແມ່ນປະເພດທຸລະກິດ: ທະນາຄານ; ການປະກັນໄພ; ການປຸງແຕ່ງໄມ້ (ຍົກເວັ້ນສ່ວນທີ່ໄດ້ກຳນົດໄວ້ໃນແຈ້ງການ ເລກທີ 2040/ອຄ.ສລທ, ລົງວັນທີ 25 ກັນຍາ 2012 ເລື່ອງ: ການຂຶ້ນທະບຽນວິສາຫະກິດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້) ; ການບິນ; ການນຳເຂົ້ານ້ຳມັນເຊື້ອໄຟ (ບໍ່ໄລ່ແກ້ສ໌ທຸງຕົ້ມ) ແລະ ພາຫະນະ (ລົດທີ່ແລ່ນດ້ວຍເຄື່ອງຈັກທຸກປະເພດ);

3. ພາຍຫຼັງໄດ້ຂຶ້ນທະບຽນວິສາຫະກິດໃຫ້ແລ້ວ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງທີ່ຂຶ້ນທະບຽນວິສາຫະກິດນັ້ນ ເປັນຜູ້ຄຸ້ມຄອງການເຄື່ອນໄຫວດຳເນີນທຸລະກິດຂອງວິສາຫະກິດດັ່ງກ່າວ ແລະ ຕ້ອງລາຍງານໃຫ້ກົມສົ່ງເສີມການລົງທຶນທົ່ວໄປ (ກະຊວງອຸດສາຫະກຳ ແລະ ການຄ້າ) ຊາບກ່ຽວກັບ :

- ຊື່ວິສາຫະກິດ ແລະ ຮູບແບບ ຫລື ຮູບການວິສາຫະກິດ;
- ຜູ້ລົງທຶນຕ່າງປະເທດ ແລະ ສັນຊາດ ;
- ທຶນຈົດທະບຽນວິສາຫະກິດ ແລະ ອັດຕາສ່ວນທຶນຂອງຜູ້ລົງທຶນຕ່າງປະເທດ;
- ຂະແໜງທຸລະກິດທີ່ລະບຸໃນໃບທະບຽນວິສາຫະກິດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ຣພ

ຮມ. ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ສຽວສະຫວາດ ສະແຫວງສຶກສາ